ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

VIENTIANE CENTER
ວຽງຈັນເຊັນເຕີ

ເລກທີ: 0041/ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 07 MAR 2024

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື
ບັນດາ ຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ທີ່ນັບຖື

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2024.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍລານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມວິສາມັນ ສະພາ ບໍລິຫານ ຄັ້ງທີ 1 ປະຈຳປີ 2024 ໃນ ວັນທີ 07 ມີນາ 2024, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

ມະຕິ : ເຫັນດີຮັບຮອງແຜນການຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2023 ດັ່ງນີ້:

- ກຳນົດເອົາວັນທີ 22/03/2024 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນຂອງ ວຈຊຕ ເພື່ອການົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2023;
- ວັນ ເວລາ ແລະ ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2023 ແມ່ນການົດເອົາວັນທີ 29/04/2024 ເວລາ 14:00 ໂມງ ທີ່ຫ້ອງປະຊຸມ Diamond room ຂອງໂຮງແຮມແລນມາກ.
- ສຳລັບວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ແມ່ນຈະແຈ້ງໃຫ້ທ່ານຊາບໃນໜັງສືແຈ້ງເຊີນ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັນເຕີ ມະຫາຊົນ Vientiane Center Lao Public Company

He Jun

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ,ໂທ ແລະ ແຟັກ (+856)21 228299